ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 236 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2020

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 20/ສພຊ, ລົງວັນທີ 12 ພະຈິກ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 27/ຄປຈ, ລົງວັນທີ 10 ທັນວາ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 20 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 12 / 11 / 20

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ ໃນວາລະກອງປະຊຸມ ຄັ້ງວັນທີ 12 ພະຈິກ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 88 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2020

# ກົດໝາຍ
# ວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຮ່ວມມືລະຫວ່າງປະເທດທາງອາຍາໃຫ້ຖືກຕ້ອງ ເພື່ອເຮັດໃຫ້ການຮ່ວມມື, ການສະກັດກັ້ນ ແລະ ຕ້ານອາຊະຍາກຳ, ການສືບສວນ-ສອບສວນ ແລະ ການຮ້ອງຟ້ອງຄະດີອາຍາ ມີປະສິດທິພາບ, ມີປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ ແລະ ພົນລະເມືອງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຮ່ວມມືລະຫວ່າງປະເທດທາງອາຍາ**

ການຮ່ວມມືລະຫວ່າງປະເທດທາງອາຍາ ແມ່ນ ການໃຫ້ການຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງອາຍາ ລະຫວ່າງລັດ ແຫ່ງ ສປປ ລາວ ກັບ ລັດຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລັດທີ່ຮ້ອງຂໍ** ໝາຍເຖິງ ລັດໃດໜຶ່ງ ທີ່ຮ້ອງຂໍການຮ່ວມມືຈາກລັດອື່ນທາງອາຍາ;
2. **ລັດທີ່ຖືກຮ້ອງຂໍ** ໝາຍເຖິງ ລັດໃດໜຶ່ງ ຊຶ່ງໄດ້ຮັບການຮ້ອງຂໍການຮ່ວມມືຈາກລັດອື່ນທາງອາຍາ;
3. **ເຄື່ອງມືທີ່ໃຊ້ໃນການກໍ່ອາຊະຍາກຳ** ໝາຍເຖິງ ເຄື່ອງມື ຫຼື ວັດຖຸສິ່ງຂອງ ຫຼື ຊັບສິນ ທີ່ນຳໃຊ້ເຂົ້າໃນການກໍ່ອາຊະຍາກຳໃດໜຶ່ງ;

4. **ວິທີການດໍາເນີນຄະດີອາຍາ** ໝາຍເຖິງ ວິທີການສືບສວນ-ສອບສວນ, ວິທີການໄອຍະການປະຊາຊົນ ແລະ ສານປະຊາຊົນ;

5. **ອາຊະຍາກໍາ** ໝາຍເຖິງ ການປະພຶດ ຫຼື ການກະທໍາ ທີ່ພາໃຫ້ມີການລົງໂທດທາງອາຍາ ຕາມກົດໝາຍ ຂອງ ສປປ ລາວ ແລະ ຕາມກົດໝາຍຂອງລັດທີ່ຮ້ອງຂໍ;

6. **ທາງອາຍາ** ໝາຍເຖິງ ເລື່ອງທີ່ກ່ຽວຂ້ອງກັບປະມວນກົດໝາຍອາຍາ ແລະ ການດໍາເນີນຄະດີອາຍາ;

7. **ເອກະລັກຂອງບຸກຄົນ** ໝາຍເຖິງ ຕໍານິຮູບປະພັນ, ບຸກຄະລິກກະພາບ ແລະ ອື່ນໆ.

**ມາດຕາ 4 ຫຼັກການ ການຮ່ວມມືລະຫວ່າງປະເທດທາງອາຍາ**

ການຮ່ວມມືລະຫວ່າງປະເທດທາງອາຍາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບເອກະລາດ, ອະທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ;

2. ເຄົາລົບ ແລະ ປະຕິບັດຕາມ ລັດຖະທໍາມະນູນ, ກົດໝາຍ ຂອງ ສປປ ລາວ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

3. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

4. ເຄົາລົບ ກຽດສັກສີ, ສິດ ແລະ ເສລີພາບ ຂອງບຸກຄົນທີ່ກ່ຽວຂ້ອງ;

5. ຮັບປະກັນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ຖືກຕ້ອງ ແລະ ວ່ອງໄວ.

**ມາດຕາ 5 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບການຮ່ວມມືທາງອາຍາ ລະຫວ່າງ ລັດ ແຫ່ງ ສປປ ລາວ ກັບ ລັດຕ່າງປະເທດ ທີ່ຮ້ອງຂໍ ຫຼື ຖືກຮ້ອງຂໍ.

ກົດໝາຍສະບັບນີ້ ບໍ່ນໍາໃຊ້ສໍາລັບການສົ່ງຜູ້ຮ້າຍຂ້າມແດນ, ການໂອນຕົວຜູ້ຖືກສານຕັດສິນລົງໂທດ, ການໂອນສໍານວນຄະດີອາຍາ, ເວັ້ນເສຍແຕ່ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຫາກກໍານົດໄວ້ເປັນຢ່າງອື່ນ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ຊຸກຍູ້ ແລະ ສົ່ງເສີມ ການຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຮ່ວມມືລະຫວ່າງປະເທດທາງອາຍາ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ສໍາມະນາ, ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ, ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອພັດທະນາວຽກງານຮ່ວມມືລະຫວ່າງປະເທດທາງອາຍາ.

# ພາກທີ II
# ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາຂອງຕ່າງປະເທດ
## ໝວດທີ 1
## ຂອບເຂດການຮ້ອງຂໍການຮ່ວມມື ແລະ ການປະຕິເສດການຮ້ອງຂໍການຮ່ວມມື

**ມາດຕາ 7 ຂອບເຂດການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ**

ການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ມີຂອບເຂດ ດັ່ງນີ້:

1. ການເອົາຄຳໃຫ້ການ;
2. ການສະໜອງຂໍ້ມູນ ຫຼັກຖານ;
3. ການເຂົ້າຮ່ວມຂອງບຸກຄົນໃນລັດທີ່ຮ້ອງຂໍ;
4. ການເຂົ້າຮ່ວມໃນການດຳເນີນຄະດີອາຍາ ຂອງບຸກຄົນທີ່ປະຕິບັດໂທດ ຫຼື ຖືກກັກຂັງ;
5. ການຊອກຮູ້ບ່ອນຢູ່ ຫຼື ເອກະລັກຂອງບຸກຄົນ;
6. ການກວດຄົ້ນ, ການຍຶດ ແລະ ສົ່ງມອບຂໍ້ມູນຫຼັກຖານ;
7. ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ;
8. ການຣິບຊັບ ແລະ ຣິບວັດຖຸສິ່ງຂອງ;
9. ບັນຫາອື່ນ ທາງອາຍາ ທີ່ຮ້ອງຂໍ ຫຼື ຖືກຮ້ອງຂໍ.

**ມາດຕາ 8 ການປະຕິເສດການຮ້ອງຂໍການຮ່ວມມື**

ສປປ ລາວ ປະຕິເສດການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການໃຫ້ຄວາມຮ່ວມມືນັ້ນ ອາດສົ່ງຜົນກະທົບ ຕໍ່ອະທິປະໄຕ, ຄວາມສະຫງົບ, ຄວາມໝັ້ນຄົງຂອງຊາດ ຫຼື ຜົນປະໂຫຍດລວມ ຂອງ ສປປ ລາວ;

2. ການໃຫ້ຄວາມຮ່ວມມືນັ້ນ ບໍ່ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ກົດໝາຍຂອງ ສປປ ລາວ;

3. ພຶດຕິກຳທີ່ພົວພັນກັບການຮ້ອງຂໍໃນການຮ່ວມມືນັ້ນ ບໍ່ເປັນການກະທຳຜິດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນ ຂອງ ສປປ ລາວ ແລະ ກົດໝາຍ ຂອງລັດທີ່ຮ້ອງຂໍ;

4. ການຮ້ອງຂໍການຮ່ວມມືນັ້ນ ພົວພັນເຖິງການສືບສວນ-ສອບສວນ, ການຮ້ອງຟ້ອງ ຫຼື ການລົງໂທດບຸກຄົນໃດໜຶ່ງ ຍ້ອນການກະທຳຜິດທາງດ້ານການເມືອງ ຫຼື ທາງທະຫານ;

5. ການຮ້ອງຂໍການຮ່ວມມືນັ້ນ ມີພື້ນຖານທີ່ພາໃຫ້ເຊື່ອວ່າ ໄດ້ສ້າງຂຶ້ນ ເພື່ອຈຸດປະສົງຂອງການສືບສວນ-ສອບສວນ, ສັ່ງຟ້ອງ, ລົງໂທດ ຫຼື ກໍ່ຄວາມເສຍຫາຍຢ່າງອື່ນ ຕໍ່ບຸກຄົນໃດໜຶ່ງ ຍ້ອນສາເຫດທາງດ້ານເຊື້ອຊາດ, ສາສະໜາ, ເພດ, ເຜົ່າ, ສັນຊາດ ຫຼື ບັນຫາທາງດ້ານການເມືອງຂອງບຸກຄົນນັ້ນ;

6. ລັດທີ່ຮ້ອງຂໍນັ້ນ ບໍ່ໄດ້ຢືນຢັນວ່າ ຕົນຈະໃຫ້ການຮ່ວມມືຕໍ່ບັນຫາທີ່ຄ້າຍຄືກັນ ທີ່ ສປປ ລາວ ອາດຮ້ອງຂໍ;

7. ລັດທີ່ຮ້ອງຂໍ ບໍ່ໄດ້ກຳນົດຈະແຈ້ງ ລາຍລະອຽດ ແລະ ຈຸດປະສົງ ຂອງການນຳໃຊ້ຂໍ້ມູນ ຫຼື ຄວາມຊ່ວຍເຫຼືອໃນຄຳຮ້ອງຂໍຂອງຕົນ;